# ຂໍ້ມູນສຳລັບບັນດາພໍ່ແມ່ ກ່ຽວກັບ ການ ຊັນນະສູດສົບ ຂອງ ລູກທີ່ຕາຍໃນທ້ອງ

*ເມື່ອລູກຂອງທ່ານຕາຍໃນທ້ອງນັ້ນ ຄວາມຫວັງແລະຄວາມຝັນກໍພັງທະລາຍລົງໄປໝົດ ແລະ ຊີວິດກໍປ່ຽນແປງໄປ.  ພໍ່ແມ່ຫຼາຍຄົນກໍມີຄວາມຮູ້ສຶກຕົກໃຈແລະສັບສົນເມື່ອໄດ້ຊາບວ່າລູກນ້ອຍຂອງພວກເຂົາໄດ້ເສັຍຊີວິດໄປແລ້ວ. ເດັກທາຣົກບໍ່ຄວນຕາຍ. ແຕ່ເມື່ອພວກເຂົາໄດ້ຕາຍໄປແລ້ວ ມັນກໍເປັນການສູນເສັຍອັນຖ້ວມທົ້ນ ແລະ ເຈັບປວດ. ມັນເປັນຄວາມໂສກເສົ້າອັນໃຫຍ່ຫຼວງທີ່ລູກນ້ອຍຂອງທ່ານໄດ້ເສັຍຊີວິດໄປ.*

*ທ່ານອາດມີຄຳຖາມຫຼາຍຄຳຖາມ ແລະ ອາດຈະຕ້ອງມີການຕັດສິນໃຈຫຼາຍຢ່າງທີ່ຕ້ອງເຮັດພາຍໃນເວລາຫຼາຍມື້ ແລະ ຫຼາຍອາທິດທີ່ຈະມາເຖິງ. ມີການຊ່ວຍເຫຼືອໄວ້ໃຫ້ທ່ານ ຜູ້ທີ່ໃຫ້ຄວາມດູແລທ່ານກໍສາມາດໃຫ້ຄຳແນະນຳໄດ້.*

***ເຈັ້ຍໃບປິວນີ້ ໄດ້ຖືກຂຽນຂຶ້ນມາເພື່ອຊ່ວຍທ່ານໃນການຕັດສິນໃຈກ່ຽວກັບເຣື່ອງການຊັນນະສູດສົບ.***

ການຕັດສິນໃຈກ່ຽວກັບການຊັນນະສູດສົບນີ້ ອາດເປັນເຣື່ອງຍາກທີ່ສຸດ. ມັນເປັນສິ່ງທີ່ທ່ານຕ້ອງຕັດສິນໃຈໃນສິ່ງທີ່ຖືກຕ້ອງສຳລັບທ່ານເລະຄອບຄົວຂອງທ່ານ.  ຈົ່ງພິຈາຣະນາເບິ່ງວ່າ ທ່ານແລະຄອບຄົວຂອງທ່ານຈະຮູ້ສຶກຢ່າງໃດໃນອະນາຄົດ. ໂດຍ ສະເພາະແລ້ວ ຈົ່ງຄິດເບິ່ງວ່າ ການຊັນນະສູດສົບນີ້ ຈະຊ່ວຍທ່ານແລະຄອບຄົວຂອງທ່ານໄດ້ຫຼືບໍ ເມື່ອໄດ້ຮູ້ສາເຫດວ່າເປັນຫຍັງລູກນ້ອຍຂອງທ່ານຈິ່ງຕາຍ.  ພະນັກງານຢູ່ໃນໂຮງໝໍຈະເຄົາຣົບ ແລະ ອູ້ມຊູທ່ານສເມີ ບໍ່ວ່າທ່ານຈະມີການຕັດສິນໃຈແບບໃດກ່ຽວກັບ ການຊັນນະສູດສົບນີ້.

ການຊັນນະສູດສົບ ຂອງເດັກທີ່ຕາຍໃນທ້ອງນີ້ ຈະສາມາດດຳເນີນໄປໄດ້ກໍຕໍ່ເມື່ອມີຄວາມຍິນຍອມຈາກພໍ່ແມ່ເທົ່ານັ້ນ.

ຫຼັງຈາກທີ່ໄດ້ອ່ານເບິ່ງຂໍ້ມູນນີ້ແລ້ວ ທ່ານອາດຈະເຫັນວ່າ ມັນເປັນສິ່ງທີ່ມີປໂຍດໃນການໂອ້ລົມເຣື່ອງການຊັນນະສູດສົບ ກັບນາຍໝໍ ຫຼື ພະຍາບານພະດຸງຄັນຊຶ່ງເປັນຜູ້ດູແລທ່ານມາພາຍໃນລະຍະທີ່ທ່ານຕັ້ງຄັນ ຫຼື ກັບຜູ້ໃຫ້ຄຳປຶກສາຫາລື ຫຼື ພະນັກງານສັງຄົມສົງເຄາະ ຂອງທາງໂຮງໝໍ.  ທ່ານສາມາດຂໍເວລາຕື່ມເພື່ອຄິດເບິ່ງກ່ຽວກັບເຣື່ອງນີ້ ແລະ ເວົ້າລົມກັບຄູ່ຄອງຄອບຄົວ ແລະ ໝູ່ເພື່ອນ ຫຼື ຜູ້ນຳທາງສາສນາ ຂອງທ່ານ.

**ການຊັນນະສູດສົບ ແມ່ນຫຍັງ?**

ການຊັນນະສູດສົບ ຫຼື ທີ່ຮູ້ກັນອີກຢ່າງນຶ່ງວ່າ ການຜ່າເບິ່ງສົບ ແມ່ນການກວດທາງແພດຮ່າງກາຍຄົນທີ່ຕາຍແລ້ວ. ນາຍໝໍຈະເປັນຜູ້ຊັນນະສູດສົບ (ຕາມທັມມະດາແລ້ວ ແມ່ນນາຍໝໍທີ່ຊ່ຽວຊານເຣື່ອງພະຍາດ ຫຼື ນາຍໝໍທີ່ກຳລັງຮັບການເຝິກຝົນເຣື່ອງພະຍາດວິທຍາໂດຍສະເພາະ ແລະພາຍໃຕ້ການຄວບຄຸມຂອງນາຍໝໍຊ່ຽວຊານເຣື່ອງພະຍາດ). ນາຍໝໍຊ່ຽວຊານເຣື່ອງພະຍາດ ແມ່ນນາຍໝໍທີ່ມີຄວາມຮູ້ໃນການສຶກສາເບິ່ງພະຍາດຕ່າງໆມາໂດຍສະເພາະ. ການຊັນນະສູດສົບ ແມ່ນຖືກດຳເນີນ ໄປດ້ວຍຄວາມເຄົາຣົບ ແລະ ຄວາມເອົາໃຈໃສ່ຕໍ່ສົບຂອງເດັກຢ່າງສູງສຸດ.

**ການຊັນນະສູດສົບ ຈະສາມາດໃຫ້ຂໍ້ມູນຫຍັງແດ່?**

ການຊັນນະສູດສົບ ສາມາດເຮັດໄດ້ແບບເຕັມ ຫຼື ແບບ ຈຳກັດ.  ທາງເລືອກສອງຢ່າງນີ້ຈະຖືກອະທິບາຍຢ່າງລະອຽດຕື່ມອີກ.

ການຊັນນະສູດສົບແບບເຕັມ ອາດຈະ:

- ຊ່ວຍໃຫ້ທ່ານຮູ້ຂໍ້ມູນຕື່ມກ່ຽວກັບສະພາບການທາງແພດຊຶ່ງອາດຈະເປັນສິ່ງເຮັດໃຫ້ ຫຼື ເປັນສິ່ງນຳໄປສູ່ການຕາຍຂອງລູກນ້ອຍຂອງທ່ານ

- ໃຫ້ຂໍ້ມູນທີ່ອາດຈະຢືນຢັນ ຫຼື ຕັດອອກຊຶ່ງຄວາມສົງສັຍ ແລະ ຄວາມບໍ່ສົງສັຍ ໃນສະພາບການທາງແພດ. ອັນນີ້ອາດຈະເປັນສິ່ງສຳຄັນສຳລັບທ່ານ ຫຼື ສະມາຊິກຄົນອື່ນໆໃນຄອບຄົວຂອງທ່ານ ໂດຍສະເພາະ ຖ້າຫາກວ່າ ສະພາບການນັ້ນອາດຈະເປັນກັມມະພັນ.

- ໃຫ້ຂໍ້ມູນແກ່ຜູ້ຊ່ຽວຊານດ້ານສຸຂພາບ ຊຶ່ງອາດຈະເປັນສິ່ງສຳຄັນໃນການຄວບຄຸມເບິ່ງການຕັ້ງຄັນຂອງທ່ານ ໃນອະນາຄົດ.

- ບົ່ງບອກສະພາບການຕ່າງໆຊຶ່ງອາດຈະກະທົບຕໍ່ເດັກຄົນອື່ນໆພາຍໃນຄອບຄົວຂອງທ່ານ ຫຼື ການຕັ້ງຄັນໃນ ອະນາຄົດ.

- ຊ່ວຍໃຫ້ມີຄວາມເຂົ້າໃຈແກ່ຜູ່ທີ່ໃຫ້ການດູແລທ່ານ ແລະ ໃຫ້ຄວາມຮູ້ທີ່ສາມາດນຳໄປໃຊ້ໃນການຊ່ວຍເຫຼືອແມ່ ແລະ ເດັກອື່ນໆໃນອະນາຄົດ.

ການຊັນນະສູດສົບບໍ່ໄດ້ໃຫ້ຄຳຕອບກ່ຽວກັບສາເຫດຂອງການຕາຍສເມີໄປ.

**ການຊັນນະສູດສົບແບບຈຳກັດແມ່ນຫຍັງ?**

ການຊັນນະສູດສົບແບບຈຳກັດອາດພົວພັນກັບການກວດເບິ່ງພາຍນອກເທົ່ານັ້ນ, ການກວດເບິ່ງພາຍນອກແລະການກວດເບິ່ງເຍື່ອເນື້ອພຽງເລັກນ້ອຍ ຫຼື ກວດເລືອດ ຫຼື ການກວດພາຍນອກພ້ອມດ້ວຍກວດເບິ່ງພາຍໃນແຕ່ຈຳກັດຢູ່ຕາມຈຸດໃດຈຸດນຶ່ງເທົ່ານັ້ນ.

ການຊັນນະສູດສົບແບບຈຳກັດນີ້ຈະບໍ່ໃຫ້ຂໍ້ມູນໄດ້ຫຼາຍເທົ່າກັບການຊັນນະສູດສົບແບບເຕັມ ແລະ ອາດມີທາງເປັນໄປໄດ້ທີ່ສິ່ງທີ່ຄາດບໍ່ເຖິງບາງຢ່າງອາດຖືກເບິ່ງຂ້າມໄປ. ເຖິງຢ່າງໃດກໍຕາມ, ການຊັນນະສູດສົບແບບຈຳກັດກໍສາມາດໃຫ້ຂໍ້ມູນ ທີ່ມີຄ່າໄດ້ເຊັ່ນກັນ.

**ຈະມີຫຍັງເກີດຂຶ້ນຕໍ່ລູກນ້ອຍຂອງທ່ານເວລາມີການຊັນນະສູດສົບ?**

ນາຍໝໍຄົນນຶ່ງ ຊຶ່ງປົກກະຕິແລ້ວແມ່ນນາຍໝໍຊ່ຽວຊານເຣື່ອງພະຍາດ ຈະເປັນຜູ້ຊັນນະສູດສົບ. ນາຍໝໍຈະທົບທວນເບິ່ງປວັດທາງການແພດຢ່າງລະມັດລະວັງ ແລ້ວກໍຈະກວດເບິ່ງຮ່າງຂອງລູກນ້ອຍຂອງທ່ານຢ່າງລະອຽດ. ການຊັນນະສູດສົບແບບເຕັມນີ້ ຮວມເຖິງການກວດເບິ່ງພາຍນອກຢ່າງຖ້ວນຖີ່ພ້ອມທັງການວັດແທກຕ່າງໆ ແລະ ພ້ອມທັງການກວດເບິ່ງອະວັຍວະພາຍໃນ. ອາດຈະມີການຖ່າຍເອັກຊ໌ເຣ ແລະ ຖ່າຍຮູບໄວ້ເພື່ອເປັນການຊ່ວຍໃນການກວດເບິ່ງພະຍາດ ຫຼື ເພື່ອບົ່ງຊີ້ສາເຫດຂອງການຕາຍຕື່ມອີກໃນພາຍໜ້າ.

ການຊັນນະສູດສົບແບບເຕັມເຮັດຄືກັນກັບວ່າເດັກໄດ້ຮັບການຜ່າຕັດ. ຕາມປົກກະຕິ ນາຍໝໍຊ່ຽວຊານເຣື່ອງພະຍາດຈະປາດເປີດສອງບ່ອນ ບ່ອນນຶ່ງຜ່ານຂ້າງຫຼັງຂອງຫົວ ແລະ ອີກບ່ອນນຶ່ງຢູ່ຂ້າງໜ້າຂອງຮ່າງກາຍ. ອັນນີ້ແມ່ນຈະເຮັດໃຫ້ນາຍໝໍສາມາດກວດເບິ່ງອະວັຍວະສຳຄັນໝົດທຸດອັນ ແລະ ຊອກຫາສິ່ງທີ່ຜິດປົກກະຕິທຸກໆຢ່າງ ຫຼື ຮ່ອງຮອຍໃດໆທີ່ເປັນສາເຫດຂອງການຕາຍ. ຕາມທັມມະດາແລ້ວ ຈະມີການເອົາແບບຢ່າງຂອງເຍື່ອເນື້ອ ແລະ ຂອງແຫຼວຢ່າງລະໜ້ອຍເພື່ອເອົາໄປກວດເບິ່ງດ້ວຍກ້ອງຈຸນລະທັດ ແລະ ເພື່ອການກວດອື່ນໆ ເຊັ່ນ ການກວດຫາການຕິດເຊື້ອໂຣກ ຫຼື ໃນກໍຣະນີພິເສດ ການກວດເບິ່ງເຣື່ອງກັມມະພັນ.

ບາງຄັ້ງມັນເປັນສິ່ງສຳຄັນສຳລັບນາຍໝໍຊ່ຽວຊານເຣື່ອງພະຍາດທີ່ຕ້ອງເກັບເອົາອະວັຍວະອັນໃດອັນນຶ່ງໄວ້ທັງໝົດ (ທັມມະດາແລ້ວຈະແມ່ນສມອງ ຫຼື ຫົວໃຈ) ສຳລັບການກວດຕື່ມອີກເພື່ອຊອກຫາພະຍາດ ຫຼື ອາການບາດເຈັບອື່ນໆທີ່ບໍ່ສາມາດເຫັນດ້ວຍຕາເປົ່າໃນທັນທີທັນໃດ.
ຄວາມສຳຄັນຂອງການເກັບເອົາອະວັຍວະອັນໃດ ອັນນຶ່ງ ໄວ້ໂດຍສະເພາະນັ້ນ ອາດຈະບໍ່ສາມາດຮູ້ໄດ້ຈົນກວ່າການຊັນນະສູດສົບຈະຖືກດຳເນີນໄປ. ໃນບາງກໍຣະນີ ການເລື່ອນການຊາປະນາກິດສົບອອກໄປອາດຈະເປັນການທັນເວລາ

ພຽງພໍທີ່ຈະໄດ້ອະໄວຍະວະກັບຄືນມາສູ່ຮ່າງກາຍກ່ອນທີ່ຈະຖືກອະນຸຍາດໃຫ້ນຳໄປທຳພິທີຝັງ ຫຼືເຜົາ. ຖ້າຫາກວ່າ ມັນເປັນສິ່ງທີ່ເປັນໄປບໍ່ໄດ້ ທ່ານອາດຕັດສິນໃຈວ່າ ທ່ານຢາກໃຫ້ອະໄວຍະວະຂອງລູກນ້ອຍຂອງທ່ານ ຖືກສົ່ງກັບໄປຫາທ່ານ ຫຼື ຄົນໃດຄົນນຶ່ງທີ່ທ່ານໄດ້ແຕ່ງຕັ້ງໃຫ້ເປັນຜູ້ຮັບ ເພື່ອຈະນຳໄປຝັງຫຼືເຜົາຕ່າງຫາກ ຫຼື ໃຫ້ອົງການ ອະນາມັຍຊຸມຊົນ ນຳໄປທຳລາຍຖິ້ມໂດຍຖືກຕ້ອງຕາມກົດໝາຍ (ຕາມປົກກະຕິແລ້ວຈະແມ່ນການເຜົາ). ນາຍໝໍຂອງທ່ານ ຈະອະທິບາຍຕື່ມຢ່າງລະອຽດເຖິງການດຳເນີນການແບບນີ້.

**ຈະມີຫຍັງເກີດຂຶ້ນຫຼັງຈາກການຊັນນະສູດສົບ?**

ໃນທັນທີທີ່ການຊັນນະສູດສົບຈົບລົງ ຮ່າງຂອງເດັກກໍຈະຖືກລ້າງ ແລະ ຮອຍຜ່າກໍຈະຖືກປິດ. ໃນຫຼາຍກໍຣະນີ ຫຼັງຈາກທີ່ໃສ່ເຄື່ອງນຸ່ງໃຫ້ເດັກແລ້ວ ຮ່ອງຮອຍຂອງການຊັນນະສູດສົບກໍຈະບໍ່ປະກົດໃຫ້ເຫັນຫຼາຍປານໃດ. ທັມມະດາແລ້ວ ຫຼັງຈາກການຊັນນະສູດສົບຈົບລົງ ທ່ານແລະຄອບຄົວທ່ານກໍສາມາດເບິ່ງແລະອູ້ມລູກນ້ອຍຂອງທ່ານໄດ້ອີກ. ຮູບຮ່າງໜ້າຕາ ແລະສີຜິວຂອງລູກນ້ອຍຂອງທ່ານຈະປ່ຽນຫຼັງຈາກໄດ້ເສັຍຊີວິດໄປ ແລະ ເວລາຈັບເບິ່ງຮ່າງກາຍກໍຈະຮູ້ສຶກແປກຕ່າງໄປ. ການປ່ຽນແປງເຫຼົ່ານີ້ເກີດຂຶ້ນຕາມທັມມະຊາດຫຼັງຈາກການຕາຍ ແລະ ບໍ່ໄດ້ກ່ຽວພັນກັບການຊັນນະສູດສົບແຕ່ຢ່າງໃດ.

**ຂ້ອຍຈະຕ້ອງຈ່າຍຄ່າຊັນນະສູດສົບບໍ່?**

ຕາມທັມມະດາແລ້ວ ຈະບໍ່ມີການເສັຍຄ່າໃດໆກ່ຽວກັບການຊັນນະສູດສົບ. ເຖິງຢ່າງໃດກໍດີ, ມັນເປັນສິ່ງສຳຄັນ ທີ່ທ່ານຕ້ອງປຶກສາຫາລືກັບນາຍໝໍຂອງທ່ານ ຫຼື ຜູ້ຕ່າງໜ້າທາງໂຮງໝໍກ່ອນທີ່ທ່ານຈະໃຫ້ການຍິນຍອມ. ຖ້າແມ່ນທ່ານເປັນຝ່າຍຂໍໃຫ້ມີການຊັນນະສູດສົບ ແລະບໍ່ແມ່ນທາງໂຮງໝໍເປັນຝ່າຍຂໍ ຄ່າໃຊ້ຈ່າຍອາດຈະແມ່ນຍ້ອນຈາກການຂົນສົ່ງສົບລູກນ້ອຍຂອງທ່ານໄປຫາໂຮງໝໍທີ່ທຳການຊັນນະສູດສົບເດັກ. ການຊ່ວຍເຫຼືອດ້ານການເງິນ ຄ່າຝັງສົບລູກນ້ອຍຂອງທ່ານ ຫຼື ຂອງອະໄວຍະວະທີ່ ຖືກເກັບໄວ້ ກໍອາດຈະມີໄວ້ໃຫ້ໂດຍຜ່ານທາງໂຮງໝໍ ຫຼື ບໍຣິການສາທາຣະນະສຸກໃນເຂດທ້ອງຖິ່ນ.

**ເປັນຫຍັງຈຶ່ງຕ້ອງມີການຍິນຍອມສຳລັບການຊັນນະສູດສົບ?**

ກ່ອນທີ່ຈະມີການຊັນນະສູດສົບລູກທີ່ຕາຍໃນທ້ອງໄດ້ກໍຕ້ອງມີການຍິນຍອມເປັນລາຍລັກອັກສອນຈາກທ່ານເສັຍກ່ອນ. ອັນນີ້ແມ່ນສິ່ງທີ່ທາງກົດໝາຍຕ້ອງການ. ຜູ້ຊ່ຽວຊານດ້ານການແພດຈະຕິດຕໍ່ທ່ານ ແລະ ຂໍການຍິນຍອມຕໍ່ການຊັນນະສູດສົບຈາກທ່ານ. ທ່ານມີສິດເຕັມທີ່ໃນການເລືອກວ່າທ່ານຈະໃຫ້ຄຳຍິນຍອມຕໍ່ການຊັນນະສູດສົບຫຼືບໍ່. ການຍິນຍອມຂອງທ່ານນັ້ນ ຕ້ອງຂຽນເປັນລາຍລັກອັກສອນ.

ເນື່ອງຈາກວ່າ ການຊັນນະສູດສົບນີ້ອາດຈະເປີດເຜີຍຂໍ້ມູນເຣື່ອງກັມມະພັນທີ່ພົວພັນກັບຜູ້ໃຫ້ກຳເນີດຝ່າຍໃດຝ່າຍນຶ່ງ ດັ່ງນັ້ນ ການຍິນຍອມຈຶ່ງຕ້ອງຮວມຂໍ້ກຳນົດທີ່ຕ້ອງຮູ້ວ່າຜູ້ໃຫ້ກຳເນີດອີກຝ່າຍນຶ່ງຈະມີການຄັດຄ້ານຫຼືບໍ່.

ອີກທາງນຶ່ງ, ທ່ານອາດຈະຢາກໃຫ້ຄົນອື່ນຕັດສິນໃຈແທນທ່ານກ່ຽວກັບການຍິນຍອມຕໍ່ການຊັນນະສູດສົບ ແລະ ການເອົາເຢື່ອເນື້ອອອກໄປເພື່ອຈຸດປະສົງຂອງການຊັນນະສູດສົບ. ມີຟອຣ໌ມນຶ່ງຊຶ່ງທ່ານຈະຖືກຂໍໃຫ້ຂຽນຕື່ມຖ້າຫາກວ່າທ່ານຕ້ອງການໃຫ້ຄົນອື່ນທຳການຕັດສິນໃຈໃນເຣື່ອງນີ້ແທນທ່ານ. ທ່ານຕ້ອງເຂົ້າໃຈວ່າ ຖ້າເຮັດແບບນີ້ ທ່ານໄດ້ອະນຸຍາດໃຫ້ຄົນອື່ນເປັນຜູ້ຕັດສິນໃຈກ່ຽວກັບລູກຂອງທ່ານໃນເຣື່ອງນີ້.

**ຈະມີຫຍັງເກີດຂຶ້ນຫຼັງຈາກທີ່ໄດ້ໃຫ້ການຍິນຍອມຕໍ່ການຊັນນະສູດສົບແລ້ວ?**

ການຊັນນະສູດສົບກໍຈະຖືກດຳເນີນໄປໃນທັນທີທີ່ໄດ້ມີການຍິນຍອມ. ບາງຄັ້ງ ເມື່ອມີສະພາບການບາງຢ່າງທີ່ໜ້າສົງໃສ ກໍຈະມີການເອົາຕົວຢ່າງບາງອັນໃນທັນທີຫຼັງຈາກການຕາຍເພື່ອຈະສາມາດດຳເນີນການທົດສອບໄດ້. ຖ້າຫາກວ່າອັນນີ້ແມ່ນກໍຣະນີຂອງທ່ານ ນາຍໝໍຂອງທ່ານກໍຈະປຶກສາຫາລືເຣື່ອງນີ້ກັບທ່ານ. ຖ້າທ່ານຢາກເບິ່ງລູກຂອງທ່ານກ່ອນທີ່ຈະມີການຊັນນະສູດສົບ ຈົ່ງແຈ້ງໃຫ້ນາຍໝໍຂອງທ່ານ ຫຼື ພະຍາບານພະດຸງຄັນຊາບ ແລ້ວກໍຈະມີການຈັດ

ການໃຫ້ເລື່ອນການຊັນນະສູດສົບອອກໄປ. ການຊັນນະສູດສົບສາມາດຖືກເລື່ອນອອກໄປໄດ້ພຽງແຕ່ເວລາສັ້ນ ແຕ່ວ່າເຫັນສົມຄວນວ່າຢູ່ພາຍໃນ48 ຊົ່ວໂມງ.

**ຍາມໃດຂ້ອຍຈຶ່ງຈະຮູ້ຜົນຂອງການຊັນນະສູດສົບ?**

ການຣາຍງານເບື້ອງຕົ້ນຂອງການຊັນນະສູດສົບຈະອອກໃຫ້ພາຍໃນເວລາສອງສາມມື້ ແຕ່ວ່າຜົນຂອງການກວດບາງຢ່າງອາດຈະບໍ່ທັນມີໃຫ້ເປັນເວລາສິບສອງອາທິດ ຫຼັງຈາກນັ້ນແລ້ວຈຶ່ງຈະມີການກະກຽມຣາຍງານອັນສຸດທ້າຍ.

ທ່ານຄວນພິຈາຣະນາເບິ່ງວ່າ ຈະເປັນການດີສຳລັບທ່ານຫຼືບໍ່ໃນການໄດ້ຮັບຣາຍງານເຣື່ອງຊັນນະສູດສົບຈາກຜູ້ດູແລທ່ານໂດຍກົງ ຫຼືວ່າໄດ້ຮັບສຳເນົານຶ່ງໂດຍຜ່ານນາຍໝໍຄອບຄົວຂອງທ່ານ ຫຼື ຈາກນາຍໝໍຄົນອື່ນຊຶ່ງສາມາດໂອ້ລົມເຣື່ອງຣາຍງານນີ້ກັບທ່ານ. ຂໍແນະນຳໃຫ້ທ່ານນັດໝາຍພົບກັບນາຍໝໍຄົນໃດຄົນນຶ່ງໃນຄະນະ ເພື່ອໂອ້ລົມເຣື່ອງຣາຍງານ ແລະ ບັນຫາໃດໆທີ່ອາດຈະມີແກ່ທ່ານ ຫຼື ຄອບຄົວຂອງທ່ານ ເພາະວ່າຣາຍງານນີ້ອາດຈະມີຄຳສັບທາງແພດຢູ່ນຳ.

## ການເກັບໄວ້ ແລະ ການໃຊ້ອະວັຍວະ ແລະ ເຍື່ອເນື້ອ ສຳລັບການບຳບັດໂຣກ ເພື່ອຈຸດປະສົງທາງດ້ານການແພດ ແລະ ດ້ານວິທຍາສາດ

ໃນເວລາທີ່ຜູ້ຊ່ຽວຊານດ້ານການແພດຕິດຕໍ່ທ່ານເພື່ອຂໍການຍິນຍອມເຣື່ອງຊັນນະສູດສົບນັ້ນ ທ່ານຍັງອາດຈະຖືກຂໍໃຫ້ພິຈາຣະນາໃນການອະນຸຍາດໃຫ້ໃຊ້ອະວັຍວະ ຫຼື ເຍື່ອເນື້ອຂອງລູກທ່ານເພື່ອຈຸດປະສົງອື່ນໆ (ເຊັ່ນການຄົ້ນຄວ້າ, ຈຸດປະສົງຂອງທາງແພດ ຫຼື ການບຳບັດໂຣກ) ທີ່ບໍ່ໄດ້ເປັນສ່ວນຂອງການຊັນນະສູດສົບ.

ຖ້າທ່ານຍິນຍອມໃນການເກັບອະວັຍວະ ແລະ/ຫຼື ເຍື່ອເນື້ອຂອງລູກທ່ານເພື່ອການຄົ້ນຄວ້າ ເພື່ອຈຸດປະສົງທາງແພດ ຫຼື ການບຳບັດໂຣກ, ອະວັຍວະ ຫຼື ເຍື່ອເນື້ອນັ້ນ ກໍຈະຖືກເກັບໄວ້ໃນຊົ່ວລະຍະນຶ່ງຕາມກຳນົດທີ່ຕ້ອງການ. ລະຍະເວລາຂອງການເກັບເອົາອະວັຍວະ ຫຼື ເຍື່ອເນື້ອສຳລັບການຄົ້ນຄວ້ານັ້ນ ອາດຈະບົ່ງບອກໄວ້ຢູ່ໃນຂໍ້ມູນຈຳເພາະ ກ່ຽວກັບໂຄງການການຄົ້ນຄວ້າ ຫຼື ທ່ານສາມາດຂໍເອົາຂໍ້ມູນເພີ້ມຕື່ມໄດ້.

ທ່ານບໍ່ຈຳເປັນຕ້ອງຍິນຍອມໃຫ້ໃຊ້ອະວັຍວະ ຫຼື ເຍື່ອເນື້ອ ເພື່ອການບຳບັດໂຣກ ເພື່ອຈຸດປະສົງທາງແພດ ຫຼື ວິທຍາສາດ. ການຊັນນະສູດສົບກໍຍັງຈະດຳເນີນໄປ ເຖິງແມ່ນວ່າທ່ານຈະບໍ່ຍິນຍອມຕໍ່ການໃຫ້ໃຊ້ອະວັຍະວະເພື່ອຈຸດປະສົງເຫຼົ່ານີ້ກໍຕາມ. ຖ້າທ່ານຍິນຍອມໃນເຣື່ອງນີ້ ກໍໝາຍເຖິງແຕ່ພຽງເຍື່ອເນື້ອທີ່ໄດ້ຖືກເອົາອອກມາແລ້ວເພື່ອຈຸດປະສົງຂອງການຊັນນະສູດສົບເທົ່ານັ້ນ. ມັນບໍ່ໄດ້ໝາຍຄວາມວ່າຈະມີການເອົາອະວັຍວະຫຼືເຍື່ອເນື້ອອອກຕື່ມອີກ.

**ການອູ້ມຊູທາງດ້ານຂໍ້ມູນ ແລະ ການສູນເສັຽ**

ຖ້າທ່ານມີຄຳຖາມໃດໆ ນາຍໝໍຂອງທ່ານ ພະຍາບານພະດຸງຄັນ ຜູ້ປະສານງານ ການຊັນນະສູດສົບ ຫຼື ພະນັກງານສັງຄົມສົງເຄາະ ຈະພະຍາຍາມຕອບຄຳຖາມຂອງທ່ານ. ຜູ້ຊ່ຽວຊານທາງແພດສາມາດໃຫ້ລາຍລະອຽດຂອງການຕິດຕໍ່ຂອງກຸ່ມອູ້ມຊູຕ່າງໆເພື່ອຊ່ວຍທ່ານໃຫ້ຜ່ານພົ້ນເວລາອັນໂສກເສົ້ານີ້.

SIDS ແລະ Kids NSW (ຮ່ວມກັບ SANDS) ໃຫ້ບໍຣິການການອູ້ມຊູເຣື່ອງຄວາມສູນເສັຽ ແກ່ບັນດາຄອບຄົວທີ່ໄດ້ປະສົບກັບການເສັຽຊີວິດຂອງລູກນ້ອຍຂອງພວກເຂົາເຈົ້າ ເພື່ອຮັບການອູ້ມຊູ ແລະ ເອົາຂໍ້ມູນຕ່າງໆ ຈົ່ງໂທຣະສັບຫາເບີ 02 9818 8400 ໂທຣະສັບຟຣີ ເບີ 1800 651 186 ຫຼື ຊອກຫາເອົາຂໍ້ມູນໄດ້ຕາມເວັບໄຊ໌ www.sidsandkids.org

**ບົດສລຸບ**

- ການຊັນນະສູດສົບແມ່ນກາດກວດອັນສຳຄັນທາງແພດ ເພື່ອຊ່ວຍໃຫ້ຄົ້ນພົບຄຳຕອບວ່າເປັນຫຍັງ ລູກນ້ອຍຂອງທ່ານຈຶ່ງຕາຍ ແລະ ເພື່ອຈຳກັດ ສະພາບການທີ່ສາມາດຮັກສາໄດ້ ຫຼື ທີ່ເປັນທາງກັມມະພັນ ສຳລັບການຕັ້ງຄັນໃນອະນາຄົດ.

- ຖ້າທ່ານມີຄຳຖາມໃດໆກ່ຽວກັບການຊັນນະສູດສົບນີ້ ອາດຈະເປັນການຊ່ວຍໄດ້ຖ້າທ່ານໂອ້ລົມກັບນາຍໝໍຂອງທ່ານ ກັບພະຍາບານພະດຸງຄັນ ພະນັກງານ ສັງຄົມສົງເຄາະ ຫຼື ຜູ້ນຳທາງສາສນາ ຫຼື ສະມາຊິກຄອບຄົວຂອງທ່ານ.

- ຖ້າທ່ານບໍ່ຕ້ອງການໃຫ້ລູກນ້ອຍຂອງທ່ານມີການຊັນນະສູດສົບແບບເຕັມ ຈຶ່ງໂອ້ລົມກັບນາຍໝໍຂອງທ່ານກ່ຽວກັບການກວດແບບອື່ນໆ ຊຶ່ງອາດຈະໃຫ້ຂໍ້ມູນກ່ຽວກັບສາເຫດການຕາຍໃຫ້ແກ່ທ່ານຫຼາຍກວ່າ

- ການຊັນນະສູດສົບຈະບໍ່ສາມາດຖືກດຳເນີນໄປໄດ້ໂດຍບໍ່ມີການຍິນຍອມເປັນລາຍລັກອັກສອນຈາກທ່ານ.

- ການຊັນນະສູດສົບຢູ່ໂຮງໝໍຈະຖືກດຳເນີນໄປໃຫ້ໄວທີ່ສຸດເທົ່າທີ່ໄວໄດ້ຫຼັງຈາກທີ່ມີການຍິນຍອມ. ຕາມປົກກະຕິແລ້ວ ຈະແມ່ນພາຍໃນເວລາ 48 ຊົ່ວໂມງຫຼັງຈາກການຕາຍ.

- ຖ້າທ່ານຕ້ອງການ ທ່ານກໍສາມາດເບິ່ງ ແລະ ອູ້ມລູກນ້ອຍຂອງທ່ານໄດ້ອີກຫຼັງຈາກການຊັນນະສູດສົບ.

- ຕາມທັມມະດາແລ້ວ ຜົນຂອງການຊັນນະສູດສົບນີ້ ຈະຖືກສົ່ງໄປໃຫ້ນາຍໝໍພາຍໃນເວລາ 6 ຫາ 12 ອາທິດ.

**ເບີໂທຣະສັບສຳລັບການຕິດຕໍ່**

ຜູ້ປະສານງານ ການຊັນນະສູດສົບ ____________________________

ໂທຣະສັບ ______________________________________________

ນາຍໝໍ _____________________________________________

ໂທຣະສັບ ______________________________________________

ພະນັກງານ ສັງຄົມສົງເຄາະ_____________________________________

ໂທຣະສັບ ______________________________________________

ຜູ້ນຳທາງສາສນາ_________________________________________

ໂທຣະສັບ ______________________________________________